

# ກອງປະຊຸມວິຊາການກ່ຽວກັບການກະກຽມຄວາມພ້ອມດ້ານພະລາທິການໃນການຕອບໂຕ້ໄພພິບັດ

ວັນທີ 13 ສິງຫາ 2019 | ນະຄອນຫຼວງວຽງຈັນ, ສປປ ລາວ.

ຜູ້ຕິດຕໍ່:

---


| | | |
|---|---|---|
| ວິໄລພົງ ສີສົມຫວັງ | *ຮັກສາການຫົວໜ້າກົມສະຫວັດດີການສັງຄົມ* | vilayphongs@gmail.com |
| ພາທຣີເຊຍ ທອນຮິວ | *ຜູ້ຊ່ຽວຊານດ້ານພະລາທິການໃນການຕອບໂຕ້ໄພພິບັດ, ອົງການອາຫານໂລກ (WFP)* | patricia.thornhill@wfp.org |

## ພາກແນະນຳ

ໃນວັນທີ 13 ສິງຫາ 2019, ໄດ້ມີການຈັດກອງປະຊຸມວິຊາການກ່ຽວກັບການກະກຽມຄວາມພ້ອມດ້ານພະລາທິການໃນການຕອບໂຕ້ໄພພິບັດຂຶ້ນທີ່ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມໂດຍ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ) ແລະ ອົງການອາຫານໂລກ (WFP), ກອງປະຊຸມໄດ້ຮັບການສະໜັບສະໜູນ ແລະ ຈັດຂຶ້ນໂດຍ ໜ່ວຍງານພະລາທິການຕອບໂຕ້ໄພພິບັດສາກົນ ຫຼື Global Logistics Cluster (GLC). ວາລະກອງປະຊຸມດັ່ງກ່າວໄດ້ຖືກສ້າງຂຶ້ນຮ່ວມກັນໂດຍ ຮສສ ແລະ ຫ້ອງການອົງການອາຫານໂລກປະຈຳ ສປປ ລາວ ເພື່ອຮັບປະກັນວ່າຈຸດປະສົງ ແລະ ຜົນໄດ້ຮັບຂອງກອງປະຊຸມຈະສອດຄ່ອງກັບບຸລິມະສິດຂອງລັດຖະບານໃນການກະກຽມຄວາມພ້ອມ ແລະ ຮັບມືກັບໄພພິບັດ.

ກອງປະຊຸມດັ່ງກ່າວຖືເປັນບາດກ້າວທຳອິດໃນການສ້າງເຄືອຄ່າຍຮ່ວມກັນທາງດ້ານການແລກປ່ຽນຂໍ້ມູນ, ການແກ້ໄຂບັນຫາ ສຳລັບວຽກງານພະລາທິການສຳລັບທຸກໆພາກສ່ວນທີ່ມີສ່ວນກ່ຽວຂ້ອງ ແລະ ໄດ້ມີການນຳສະເໜີໂຄງການການກະກຽມຄວາມພ້ອມດ້ານພະລາທິການໃນການຕອບໂຕ້ໄພພິບັດໃຫ້ແກ່ຜູ້ທີ່ຮັບຜິດຊອບກ່ຽວຂ້ອງ. ມີຜູ້ເຂົ້າຮ່ວມທັງໝົດ 39 ທ່ານຈາກພາກລັດຖະບານ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ(NGOs), ອົງການຜູ້ຕາງໜ້າຂອງອົງການສະຫະປະຊາຊາດ (UN Agencies) ແລະ ອົງການກາແດງລາວກໍ່ໃຫ້ກຽດເຂົ້າຮ່ວມໃນກອງປະຊຸມຄັ້ງນີ້.

ໃນລະຫວ່າງກອງປະຊຸມ, ການເຮັດກິດຈະກຳທີ່ເປັນບຸລິມະສິດຫຼັກໃນການເສີມຂະຫຍາຍການກະກຽມຄວາມພ້ອມດ້ານພະລາທິການ ແລະ ການໂຕ້ຕອບໄພພິບັດໃນປະເທດໄດ້ຖືກກຳນົດອອກມາໂດຍຜ່ານການປຶກສາຫາລືເປັນກຸ່ມ. ກອງປະຊຸມຍັງໄດ້ຕົກລົງເຫັນດີຕໍ່ອົງເຂດຫລັກສຳລັບການ ເຮັດກິດຈະກຳການຝຶກເຫດການຈຳລອງ ເພື່ອປະເມີນເບິ່ງຄວາມພ້ອມຂອງເຄື່ອງມືທີ່ຈຳເປັນ, ພື້ນຖານໂຄງຮ່າງ ແລະ ການຝຶກອົບຮົມ ເພື່ອເລັ່ງໃສ່ແກ້ໄຂຊ່ອງວ່າງທາງດ້ານພະລາທິການ ໃນການກຽມພ້ອມ ແລະ ຕອບໂຕ້ໄພພິບັດ.

## ປະຫວັດຄວາມເປັນມາ

ໃນປີ 2018, ສປປ ລາວ ແມ່ນໄດ້ຖືກເລືອກໃຫ້ເປັນໜຶ່ງໃນ 24 ປະເທດທີ່ເຂົ້າຮ່ວມໃນໂຄງ ການການກະກຽມຄວາມພ້ອມດ້ານພະລາທິການ ໃນການຕອບໂຕ້ໄພພິບັດ. ແຜນງານ 2016-2021 ມີຈຸດປະສົງເພື່ອເຮັດໃຫ້ລັດຖະບານໃນຂັ້ນທ້ອງຖິ່ນ, ຂັ້ນສູນກາງ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານພາຍໃນ, ອົງການຜູ້ຕາງໜ້າຂອງອົງການສະຫະປະຊາຊາດ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ ໃຫ້ມີການປະສານງານເຊິ່ງກັນ ແລະ ກັນ ເພື່ອເລັ່ງໃສ່ປັບປຸງຄວາມເຂັ້ມແຂງຂອງວຽກງານຈັດຊື້ຈັດຈ້າງພາຍໃນປະເທດ. ຜົນໄດ້ຮັບຫຼັກໃນການສ້າງເຄືອຄ່າຍການປະສານງານກ່ຽວກັບວຽກງານການກຽມຄວາມພ້ອມທາງດ້ານພະລາທິການແມ່ນໃນການກຽມຄວາມພ້ອມ ແລະ ຕອບໂຕ້ໄພພິບັດ ແມ່ນການເຕົ້າໂຮມຜູ້ທີ່ມີສ່ວນກ່ຽວຂ້ອງເພື່ອມາວາງແຜນຮ່ວມກັນກ່ອນເຫດສຸກເສີນຈະເກີດຂຶ້ນ ແລະ ສ້າງຕັ້ງທີມງານໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ.

ໃນເດືອນ ມິຖຸນາ 2019, ຜູ້ຊ່ຽວຊານທາງດ້ານວຽກງານພະລາທິການໃນການກະກຽມຄວາມພ້ອມ ແລະ ຕອບໂຕ້ໄພພິບັດ ໄດ້ຖືກມອບໜາຍໃຫ້ມາເຮັດວຽກຢູ່ ສປປລາວ, ຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການອາຫານໂລກ, ອົງການພັດທະນາອື່ນໆ ແລະ ພາກເອກະຊົນ ເພື່ອລິເລີ່ມກໍາໜົດຄວາມອາດສາມາດທາງດ້ານວຽກງານພະລາທິການຂອງລັດຖະບານໃນຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ແລະ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ໃຫ້ຄໍາແນະນໍາໃນການສ້າງຕັ້ງເຄືອຄ່າຍການປະສານງານກ່ຽວກັບວຽກງານພະລາທິການໃນການກຽມພ້ອມ ແລະ ຕອບໂຕ້ໄພພິບັດພາຍໃນປະເທດ.

## ຈຸດປະສົງ

ໄດ້ມີການກໍານົດຈຸດປະສົງຕ່າງໆໃນລະຫວ່າງກອງປະຊຸມຄື:

- ເພື່ອສ້າງເຄືອຄ່າຍການປະສານງານທາງດ້ານພະລາທິການໃນການກຽມພ້ອມ ແລະ ຕອບໂຕ້ໄພພິບັດ.
- ເພື່ອລວບລວມຄໍາຄິດເຫັນຈາກພາກລັດຖະບານ, ອົງການສະຫະປະຊາຊາດ ແລະ ອົງການຊ່ວຍເຫລືອທາງດ້ານມະນຸດສະທໍາ ກ່ຽວກັບຄວາມສາມາດດ້ານການກະກຽມຄວາມພ້ອມ, ຊ່ອງຫວ່າງ ແລະ ຄວາມຕ້ອງການດ້ານພະລາທິການໃນການຕອບໂຕ້ໄພພິບັດ.
- ເພື່ອກໍານົດແຜນປະຕິບັດງານກ່ຽວກັບການກະກຽມຄວາມພ້ອມດ້ານພະລາທິການ.
- ເພື່ອກໍານົດຂົງເຂດທີ່ຕ້ອງເອົາໃຈໃສ່ເປັນພິເສດໃນການເຮັດກິດຈະກໍາຝຶກຫັດຈໍາລອງ.

## ໂຄງຮ່າງຂອງກອງປະຊຸມ

ໄດ້ມີການແບ່ງໂຄງຮ່າງຂອງກອງປະຊຸມອອກເປັນ 3 ພາກຂອງການປະຊຸມໃນໜຶ່ງວັນຄື:

1. **ການໃຫ້ຂໍ້ມູນ:** ມີການກ່າວຄໍາປາໄສເພື່ອເປີດພິທີ ແລະ

   ການນໍາສະເໜີໃຫ້ບັນດາຜູ້ເຂົ້າຮ່ວມໄດ້ເຫັນພາບລວມດ້ານການກະກຽມຄວາມພ້ອມດ້ານພະລາທິການໃນການຕອບໂຕ້ໄພພິບັດທີ່ເປັນບູລິມະສິດຂອງລັດຖະບານ ແລະ ວິທີການທີ່ໂຄງການໆກະກຽມຄວາມພ້ອມດ້ານພະລາທິການສາມາດໃຫ້ການຊ່ວຍເຫຼືອ.
2. **ການເຮັດວຽກເປັນກຸ່ມ:** ເພື່ອກໍານົດບັນດາບົດຮຽນທີ່ໄດ້ຮຽນ, ຊ່ອງຫວ່າງ ແລະ ວິທີແກ້ໄຂ ໃນ 5 ຫົວຂໍ້ສົນທະນາກ່ຽວກັບວຽກງານພະລາທິການໃນການກຽມຄວາມພ້ອມ ແລະ ຕອບໂຕ້ໄພພິບັດ.
3. **ສັງລວມຜົນໄດ້ຮັບຂອງການສົນທະນາ:** ເພື່ອສ້າງແຜນວຽກກິດຈະກໍາ ແລະ ກໍານົດຫນ້າວຽກ

   ຫລັກທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນການເຮັດການຝຶກຫັດການຈໍາລອງ.



# ຜົນໄດ້ຮັບຈາກວາລະກອງປະຊຸມ

ຜົນໄດ້ຮັບດັ່ງຕໍ່ໄປນີ້ແມ່ນໄດ້ມາຈາກກອງປະຊຸມໃນແຕ່ລະພາກ:

**<u>ພາກທີ 1 – ການເປີດພິທີຢ່າງເປັນທາງການ ແລະ ການນຳສະເໜີ</u>**

ໃນລະຫວ່າງພາກທີ 1, ທ່ານຮັກສາການຫົວໜ້າກົມສະຫວັດດີການສັງຄົມ ແລະ ຫົວໜ້າອົງການອາຫານໂລກ, ປະຈຳສປປ ລາວ ໄດ້ສະເໜີໃຫ້ເຫັນພາບລວມຂອງບົດຮຽນທີ່ໄດ້ຮັບ ແລະ ຄວາມຄືບໜ້ານັບແຕ່ເຫດການໄພພິບັດທີ່ແຂວງອັດຕະປື ແລະ ຄວາມສຳຄັນຂອງການກະກຽມສຳລັບເຫດການໃໝ່ທີ່ອາດໃຫ່ຍກ່ວາເກົ່າເຊິ່ງບໍ່ສາອາດສາມາດຫຼີກລ້ຽງໄດ້. ຕາມມາດ້ວຍການນຳສະເໜີໃຫ້ເຫັນພາບລວມຂອງຂົງເຂດທີ່ມີຄວາມສ່ຽງທາງດ້ານໄພພິບັດ, ໂຄງສ້າງດ້ານການປະສານງານສຸກເສີນທີ່ໄດ້ຮັບການປັບປຸງ ແລະ ວິທີການໃນການກຽມພ້ອມ ແລະ ໂຕ້ຕອບໄພພິບັດ ເຊິ່ງໄດ້ມີການນຳສະເໜີໂດຍທ່ານຮອງຫົວໜ້າພະແນກການກຽມຄວາມພ້ອມ ແລະ ໂຕ້ຕອບຕໍ່ໄພພິບັດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ຜູ້ຊ່ວຍຊານໃນການກະກຽມຄວາມພ້ອມດ້ານພະລາທິການຈາກອົງການອາຫານໂລກ ໄດ້ສະເໜີລວມກ່ຽວກັບໂຄງການການກະກຽມດ້ານພະລາທິການສາກົນ, ຍຸດທະສາດໃນການຈັດຕັ້ງປະຕິບັດ ແລະ ແນວທາງທີ່ກອງປະຊຸມສາມາດສ້າງເປັນພື້ນຖານໃນການກຳນົດບັນດາກິດຈະກຳທີ່ເປັນບູລິມະສິດ.

ຜົນໄດ້ຮັບຈາກກອງປະຊຸມພາກທີ່ 1 ມີຄື:

- ລັດຖະບານ ໄດ້ອອກກົດໝາຍໃໝ່ ເຊິ່ງເປັນກົດໝາຍວ່າດ້ວຍໄພພິບັດ ແລະ ຜົນການກະກຽມຄວາມພ້ອມໃນການຮັບມືກັບໄພພິບັດໃນປີ 2019.
- ເນື່ອງຈາກເຫດການປ່ຽນແປງທາງດ້ານດິນຟ້າອາກາດເກີດຂຶ້ນເລື້ອຍໆ ແລະ ຜົນກະທົບແມ່ນຮ້າຍແຮງຂຶ້ນ. ດັ່ງນັ້ນ, ຈຶ່ງເປັນສິ່ງສຳຄັນທີ່ຈະມີການຄາດຄະເນ ແລະ ກະກຽມເຫດການອື່ນທີ່ອາດເກີດຂຶ້ນເຊິ່ງອາດຈະມີຜົນກະທົບຂະໜາດໃຫ່ຍສຳລັບ ສປປ ລາວ.
- ຮສສ ແມ່ນເປັນຜູ້ນຳພາໃນໂຄງການການກະກຽມຄວາມພ້ອມດ້ານພາລາທິການໃນການຕອບໂຕ້ໄພພິບັດໂດຍໄດ້ຮັບການຊ່ວຍເຫຼືອຈາກ ອົງການອາຫານໂລກ ແລະ ຫນ່ວຍງານພະລາທິການສາກົນໃນການຕອບໂຕ້ໄພພິບັດ. ຄວາມສຳຄັນຂອງໂຄງການດັ່ງກ່າວ ແມ່ນໄດ້ຮັບການຍອມຮັບຈາກທຸກພາກສ່ວນທີ່ກ່ຽວຂ້ອງແລະ ກິດຈະກຳຂອງໂຄງການແມ່ນສອດຄ່ອງກັບບັນດາຂົງເຂດຫຼັກຂອງແຜນ ງານການຕອບໂຕ້ໄພພິບັດ.
- ລັດຖະບານ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຕ້ອງເຮັດວຽກຮ່ວມກັນ ເພື່ອແບ່ງປັນຂໍ້ມູນດ້ານພະລາທິການ ແລະ ເພື່ອປັບປຸງ ແລະ ພັດທະນາເຄື່ອງມືກ່ຽວກັບວຽກງານພະລາທິການໃນການກຽມພ້ອມ ແລະ ຕອບໂຕ້ໄພພິບັດ.





**ພາກທີ 2 – ການປຶກສາຫາລືເປັນກຸ່ມກ່ຽວກັບຊ່ອງວ່າງ ແລະ ວິທີແກ້ໄຂບັນຫາ ຂອງວຽກງານພະລາທິການ**

ໄດ້ມີການຈັດກຸ່ມເພື່ອປຶກສາຫາລືໃນຮູບແບບ 'World Café' ເຊິ່ງແບ່ງອອກເປັນ 5 ກຸ່ມ. ແຕ່ລະກຸ່ມໄດ້ມີການປຶກສາຫາລື ແລະ ບັນທຶກເປັນເອກະສານກ່ຽວກັບບັນຫາ/ຊ່ອງຫວ່າງ ແລະ ທາງອອກສໍາລັບຫົວຂໍ້ກ່ຽວກັບວຽກງານພະລາທິການ ຈາກນັ້ນກໍ່ຍ້າຍໄປຫົວຂໍ້ໃໝ່. ກຸ່ມໄດ້ອ່ານຄໍາເຫັນຂອງກຸ່ມໃນເມື່ອກ່ອນ ແລະ ໝາຍໃສ່ສິ່ງທີ່ເຂົາເຈົ້າເຫັນດີກ່ອນເພີ່ມຄໍາເຫັນເຂົ້າຕື່ມ. ບັນຫາ ແລະ ທາງອອກທີ່ຖືກລະບຸອອກມາ ແມ່ນໄດ້ຖືກນໍາມັນເປັນຫົວຂໍ້ກ່ຽວກັບພາລະທິການດັ່ງຕໍ່ໄປນີ້:

- ການເກັບກໍາຂໍ້ມູນພາລະທິການ ແລະ ການແບ່ງເປັນຂໍ້ມູນ.
- ການສື່ສານ ແລະ ການປະສານງານກ່ຽວກັບໄພພິບັດ ແລະ ຂໍ້ມູນການຈັດຊື້ຈັດຈ້າງ ລະຫວ່າງເມືອງ, ແຂວງ ແລະ ສູນກາງ.
- ພື້ນຖານໂຄງລ່າງທາງດ້ານພະລາທິການ ຫຼື ຊ່ອງຫ່ວາງດ້ານຊັບສິນທາງດ້ານພະລາທິການ.
- ການຄຸ້ມຄອງ ແລະ ການແຈກຢາຍເຄື່ອງບັນເທົາທຸກ (ເຄື່ອງທີ່ຕ້ອງການ ແລະ ເຄື່ອງທີ່ຖືກບໍລິຈາກ).
- ການສື່ສານ ແລະ ການປະສານງານ ລະຫ່ວາງ ອົງການຈັດຕັ້ງ ແລະ ຫນ່ວຍງານ

ໃນລະຫວ່າງ ພາກທີ 3 ໄດ້ມີການວິເຄາະລະອຽດກ່ຽວກັບບົດຮຽນທີ່ໄດ້ຮັບໃນພາກທີ 2 ເຊິ່ງເປັນພາກສ່ວນຫນຶ່ງໃນການພັດທະນາແຜນກິດຈະກໍາໂຄງການ.









**ພາກທີ** 3 – ການພັດທະນາແຜນກິດຈະກຳຂອງໂຄງການ ແລະ ກິດຈະກຳຝຶກຫັດເຫດການຈຳລອງ

*ການ*ພັດທະນາແຜນກິດຈະກຳໂຄງການ

ໃນພາກທີ 3 ນີ້, ຜູ້ເຂົ້າຮ່ວມ ໄດ້ເລືອກຫົວຂໍ້ທີ່ໄດ້ຄົ້ນຄ້ວາໃນພາກຜ່ານມາ ເພື່ອມາວິເຄາະ ແລະ ພັດທະນາແຜນກິດຈະກຳໂຄງການກ່ຽວກັບວຽກງານພະລາທິການໃນການກຽມຄວາມພ້ອມ ແລະ ຕອບໂຕ້ໄພພິບັດ. ແລະ ບາງກິດຈະກຳທີ່ຖືກກຳຫນົດອອກມາແມ່ນຢູ່ນອກກອບຈຸດປະສົງຂອງໂຄງການຍ້ອນກິດຈະກຳດັ່ງກ່າວແມ່ນກ່ຽວພັນເຖິງການປະສານງານ, ແຕ່ວ່າຍັງຖືກລະບຸໃນບົດລາຍງານສະບັບນີ້. ຜົນໄດ້ຮັບຂອງກິດຈະກຳການສ້າງແຜນກິດຈະກຳໂຄງການແມ່ນສາມາດເບິ່ງໄດ້ໃນພາກຕໍ່ໄປນີ້.

ການສ້າງແຜນການ*ຝຶກຫັດ*ເຫດການ *ຈຳລອງ*

ພາຍຫຼັງການປຶກສາຫາລືກ່ຽວກັບແຜນວຽກ, ກອງປະຊຸມໄດ້ລະບຸຂົງເຂດທີ່ເປັນບູລິມະສິດເພື່ອນຳມາປະເມີນເພື່ອລະບຸເຂົ້າໃນກິດຈະກຳການຝຶກຫັດເຫດການຈຳລອງ ແລະ ເພື່ອຕົກລົງເຫັນດີໃນການຄຸ້ມຄອງ ແລະ ການວາງແຜນກິດຈະກຳການຝຶກຫັດເຫດການຈຳລອງ.

**ບັນດາຜົນໄດ້ຮັບຕ່າງໆຂ້າງລຸ່ມແມ່ນໄດ້ມີການບັນທຶກໃນລະຫວ່າງການປຶກສາຫາລືກ່ຽວກັບການວາງແຜນກິດຈະກຳການຝຶກຫັດເຫດການຈຳລອງ:**

- ໄດ້ມີການສະເຫນີໃຫ້ເຮັດກິດຈະກຳໃນໄລຍະເວລາ 1 ວັນ.
  - ຂົງເຂດທີ່ສຳຄັນທີ່ຖືກນຳສະເຫນີສະເຫນີມີຄື:
  - ການປະເມີນຄວາມພ້ອມຂອງວຽກງານພະລາທິການ ແລະ ການແບ່ງປັນຂໍ້ມູນ;
  - ການຮັບເອົາເຄື່ອງບັນເທົາທຸກໂດຍຂຶ້ນກັບຄວາມຕ້ອງການ ແລະ ການຄຸ້ມຄອງເຄື່ອງບໍລິຈາກ;
  - ການປະສານງານກ່ຽວກັບການຈັດຊື້ຈັດຈ້າງກັບພື້ນທີ່ຖືກຜົນກະທົບ.
- ຂອບເຂດຂອງການເຮັດກິດຈະກຳຝຶກຫັດຈຳລອງ: ຈະມີການເນັ້ນໃສ່ການປະສານງານກ່ຽວກັບວຽກງານພະລາທິການໃນລະດັບຊາດ. ເຖິງແນວໃດກໍ່ຕາມ ລະບົບ ແລະ ໂຄງຮ່າງຂອງໂຄງການແມ່ນຈະຖືກທົດສອບໃນລະຫວ່າງການເຮັດກິດຈະກຳເຫດການຈຳລອງກ່ຽວກັບໄພພິບັດທີ່ເກີດຂຶ້ນໃນຫລາຍພື້ນທີ່ພ້ອມກັນ.
- ສະຖານທີ່ງສະເໜີ: ໂຮງແຮມຄລາວພຣາຊາ, ນະຄອນຫຼວງວຽງຈັນ ທີ່ມີຜູ້ເຂົ້າຮ່ວມຈາກຂັ້ນແຂວງ ແລະ ເມືອງ.



# ແຜນກິດຈະກໍາໂຄງການທີ່ຖືກນໍາສະເຫນີ

ແຜນກິດຈະກໍາດັ່ງຕໍ່ໄປນີ້ແມ່ນລວມເອົາກິດຈະກໍາທີ່ໄດ້ຮັບການເຫັນດີຈາກຜູ້ເຂົ້າຮ່ວມທັງຫມົດ. ກິດຈະກໍາດັ່ງກ່າວແມ່ນຈະຖືກລວບລວມ ແລະ ຈັດບຸລິມະສິດໃນລະຫວ່າງການຈັດຕັ້ງປະຕິບັດກິດຈະກໍາເຫດການຈໍາລອງ. ກິດຈະກໍາທີ່ຖືກລະບຸອອກມາຍັງກ່ຽວພັນເຖິງການປະສານງານໃນການຕອບໂຕ້ໄພພິບັດ ແລະ ການປະສານງານລະຫວ່າງອົງກອນ. ເຊິ່ງກິດຈະກໍາດັ່ງກ່າວແມ່ນຈະຖືກສົ່ງຕໍ່ໄປຫາກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຫ້ອງການປະສານງານຂອງການສະຫະປະຊາຊາດເພື່ອຈະໄດ້ນໍາໄປຫມູນໃຊ້ເຂົ້າໃນກິດຈະກໍາໂຄງການອື່ນຕໍ່ໄປ **(ໃຫ້ເບິ່ງເອກະສານຊ້ອນທ້າຍ).**

| | ກິດຈະກໍາ | ຈຸດປະສົງ | ຕົວແທນທີ່ນໍາພາ |
|---|---|---|---|
| | **ກ. ການເກັບກໍາ ແລະ ການແບ່ງຂໍ້ມູນ** | | |
| 1 | ສ້າງ ແລະ ຈັດຕັ້ງປະຕິບັດແອັບພຣິເຄຊັນເຄື່ອນທີ່ເຊິ່ງເປັນນະວັດຕະກໍາໃນການເກັບກໍາ ແລະ ການແບ່ງປັບຂໍ້ມູນພະລາທິການໃຫ້ທ່ວງທັນຕໍ່ເວລາ ເຊັ່ນ: (ເສັ້ນທາງເຂົ້າເຖິງ, ຮູບ, ທີ່ຕັ້ງທາງດ້ານພື້ນຖານໂຄງລ່າງຂອງພະລາທິການ). | ສາມາດສ້າງແຜນທີ່ຂໍ້ມູນ ແລະ ໄດ້ຮັບການປັບປຸງໂດຍທັນທີທັນໃດເພື່ອໃຫ້ທຸກຄົນໄດ້ເຫັນ. | ຮສສ ແລະ ຫນ່ວຍງານພະລາທິການສາກົນ, ເຄືອຄ່າຍການການກຽມຄວາມພ້ອມ ທາງດ້ານພະລາທິການ |
| 2 | ສ້າງລະບົບຖານຂໍ້ມູນທີ່ໃຊ້ຮ່ວມກັນເພື່ອສັງລວມຂໍ້ມູນດ້ານພະລາທິການ. ສ້າງແຜນທີ່ຂໍ້ມູນໃນບ່ອນທີ່ສາມາດເຮັດໄດ້(ເຊື່ອມຕໍ່ກັບກິດຈະກໍາ ກ1). | ທຸກໆຂໍ້ມູນຈາກວຽກງານມະນຸດສະທໍາໄດ້ມີການສັງລວມເຂົ້າກັນໃນລະບົບຖານຂໍ້ມູນທີ່ເຊື່ອມຂໍ້ມູນເຂົ້າກັນ. | ຮສສ, ອົງການອາຫານໂລກ, ຫນ່ວຍງານພະລາທິການສາກົນເຄືອຄ່າຍການກຽມຄວາມພ້ອມ ທາງດ້ານພາລາທິການ |
| 3 | ສ້າງເວັບໄຊ໌ອອນລາຍສໍາລັບເກັບຮັກສາທຸກໆຂໍ້ກ່ຽວກັບວຽກງານພາລາທິການເຊິ່ງລວມມີ: ຄູ່ມື ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດ (ເຊື່ອມຕໍ່ກັບກິດຈະກໍາ ກ1 ແລະ ກ2). | ທຸກໆອົງກອນຊ່ວຍເຫລືອທາງດ້ານມະນຸດສະທໍາແມ່ນສາມາດຊອກຫາຂໍ້ມູນດ້ານພາລາທິການໃນເວັບໄຊ. ສາມາດຄວບຄຸມ ແລະ ປັບປຸງຂໍ້ມູນໄດ້. | ຮສສ ແລະ ຫນ່ວຍງານພະລາທິການສາກົນ, ເຄືອຄ່າຍການກຽມຄວາມພ້ອມ ທາງດ້ານພາລາທິການ |
| 4 | ສ້າງຄູ່ມື ແລະ ຈັດຝຶກອົບຮົມກ່ຽວກັບວິທີການນໍາໃຊ້ແອັບພຣິເຄຊັນໃນການເກັບກໍາຂໍ້ມູນ, ການສ້າງ ແລະ ນໍາໃຊ້ແຜນທີ່ ແລະ ເວັບໄຊ (ກ1-ກ3) | ຂໍ້ມູນແມ່ນມີການອັບເດດ. | ຫນ່ວຍງານພະລາທິການສາກົນ |
| 5 | ສ້າງລະບົບຖານຂໍ້ມູນກ່ຽວກັບການປະສານງານໃຫ້ແກ່ຜູ້ປະສານງານຫລັກໃນວຽກງານພະລາທິການ ໃຫ້ພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງກອນຊ່ວຍເຫລືອທາງດ້ານມະນຸດສະທໍາ, ພ້ອມທັງພາກເອກະຊົນ ແລະ ລັດຖະບານ. | ສາມາດຮູ້ຜູ້ຕິດຕໍ່ໃນກໍລະນີມີເຫດສຸກເສີນ. | ຮສສ ແລະ ຫນ່ວຍງານພະລາທິການສາກົນ, ເຄືອຄ່າຍການກຽມຄວາມພ້ອມ ທາງດ້ານພາລາທິການ |

| | | | |
|---|---|---|---|
| **ຂ. ການສື່ສານ ແລະ ການປະສານງານ ລະຫວ່າງຂັ້ນ ສູນກາງ, ແຂວງ ແລະ ເມືອງ** | | | |
| 1 | ມີຄວາມຈຳເປັນຕ້ອງໄດ້ສ້າງຜູ້ປະສານງານ ຫລັກກ່ຽວກັບວຽກງານພະລາທິການໃນຂັ້ນເມືອງ ແລະ ຂັ້ນແຂວງ ເຊິ່ງຈະຕ້ອງລວມເຂົ້າໃນເຄືອຄ່າຍພາລາທິການ (ເຊື່ອມຕໍ່ກັບ ກ1-5). | ໄດ້ຮັບຂໍ້ມູນຂ່າວສານທີ່ທ່ວງທັນຕໍ່ເວລາກ່ຽວກັບຄວາມຕ້ອງການຂອງວຽກງານພາລາທິການໃນຂັ້ນທ້ອງຖິ່ນ ໃນທົ່ວປະເທດ. | ຣສສ |
| 2 | ສ້າງເອກະສານອ້າງອີງດ້ານຂໍ້ກຳນົດ ແລະ ເງື່ອນໄຂ (ToR) ສຳລັບພະລາທິການໃນ ສປປ ລາວ ລວມທັງການປະສານງານໃນຂັ້ນແຂວງ ແລະ ຂັ້ນເມືອງ. | ຮັບປະກັນການປ້ອນຂໍ້ມູນຈາກພາກສະໜາມແມ່ນໄດ້ຮັບການປ້ອນເຂົ້າທຸກໆໜ້າວຽກການກະກຽມຄວາມພ້ອມ ແລະ ການຕອບໂຕ້ໄພພິບັດ. | ຣສສ ແລະ ໜ່ວຍງານພະລາທິການສາກົນ, ເຄືອຄ່າຍການກຽມຄວາມພ້ອມ ທາງດ້ານພາລາທິການ |
| 3 | ສ້າງເຄື່ອງມືການປະເມີນພາຍຫລັງໄພພິບັດເກີດຂຶ້ນກ່ຽວກັບວຽກງານພະລາທິການ ແລະ ຄູ່ມືທີ່ສອດຄ່ອງກັບຄູ່ມືການປະເມີນກ່ຽວກັບເຫດສຸກເສີນແຫ່ງຊາດ. | ໄດ້ຮັບຂໍ້ມູນທີ່ສຳຄັນຢ່າງວ່ອງໄວ. | ຣສສ, ອົງການອາຫານໂລກ ແລະ ໜ່ວຍງານພະລາທິການສາກົນ, |
| 4 | ສ້າງກຸ່ມວັອສແອັບກ່ຽວກັບການກະກຽມຄວາມພ້ອມດ້ານພະລາທິການເພື່ອໃຫ້ສາມາດໄດ້ຮັບຂໍ້ມູນທີ່ວ່ອງໄວທັນຕໍ່ເວລາ ກຸ່ມດັ່ງກ່າວສາມາດເຂົ້າເຖິງທຸກພາກສ່ວນທີ່ຮັບຜິດຊອບວຽກງານພະລາທິການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງພາຍໃນປະເທດ (ເຊື່ອງຕໍ່ກັບ ກິດຈະກຳ 1 ຖ້າຫາກແອັບພຣິເຄຊັນບໍ່ເຮັດວຽກ). | ໄດ້ຮັບຂໍ້ມູນທີ່ສຳຄັນຢ່າງວ່ອງໄວ. | ຣສສ, ອົງການອາຫານໂລກ ແລະ ໜ່ວຍງານພະລາທິການສາກົນ, |
| 5 | ສ້າງ ແລະ ຈັດຕັ້ງປະຕິບັດການຝຶກອົບຮົມດ້ານພະລາທິການໃນການໂຕ້ຕອບເຫດສຸກເສີນ ແລະ ຄູ່ມືຂັ້ນຕອນການຈັດຕັ້ງປະຕິບັດງານ. | ສ້າງຄວາມສາມາດໃນລະບົບເຄືອຄ່າຍພາລາທິການໃນການປະສານງານ ແລະ ການຕອບໂຕ້ຮ່ວມກັນ. | ຣສສ ແລະ ອາຫານໂລກ |
| **ຄ. ພື້ນຖານໂຄງລ່າງດ້ານພະລາທິການ ຫຼື ຊັບສິນດ້ານພະລາທິການ** | | | |
| 1 | ການກະກຽມຊັບສິນດ້ານພະລາທິການ, ການເກັບຮັກສາສິ່ງຂອງບັນເທົາທຸກກ່ອນເຫດໄພພິບັດ (ເຊັ່ນ: ກ່ອນລະດູຝົນໃນເຂດທີ່ຖືກນ້ຳຖ້ວມ). | ການຂົນສົ່ງພາຍຫຼັງນ້ຳຖ້ວມອາດມີຄວາມຫຍຸ້ງຍາກ. | ຣສສ, ອົງການອາຫານໂລກ, ກອງທັບ, NGO's, ກະຊວງໂຍທາທິການແລະຂົນສົ່ງ |
| 2 | ສ້າງ ແລະ ຈັດຕັ້ງປະຕິບັດຂໍ້ຈຳກັດດ້ານທາງເຂົ້າເຖິງພື້ນທີ່ຖືກຜົນກະທົບ(ເຊື່ອມກັບ ກ1-3). | ການວາງແຜນເພື່ອສ້າງເສັ້ນທາງການສະໜອງ / ການຈັດຊື້ຈັດຈ້າງທີ່ມີປະສິດຕິພາບ | ຣສສ, ໜ່ວຍງານພະລາທິການສາກົນ, ເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການ, ກຊສ, ຍທກ |

| | | | |
|---|---|---|---|
| 3 | ສັງລວມຂໍ້ມູນກ່ຽວກັບລະບົບພື້ນຖານໂຄງລ່າງ ແລະ ຊັບສິນ ພະລາທິການ (ເຊື່ອມກັບ ກ1-3). | ປະເມີນຄວາມສາມາດປະຈຸບັນ ແລະ ກໍານົດຊ່ອງຫວ່າງ | ຣສສ,ອົງການອາຫານໂລກ, ເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການ. |
| 4 | ຈັດຊື້ ຫຼື ມອບຊັບສິນທາງດ້ານພະລາທິການໃຫ້ເຂດທີ່ມີຄວາມສ່ຽງສູງຕໍ່ໄພພິບັດ (ເຊື່ອມກັບ ກ1-3) | ເຕີມຊ່ອງຫວ່າງດ້ານຄວາມສາມາດຂອງພະລາທິການ | ຣສສ (ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ). |
| 5 | ດໍາເນີນປະຕິບັດກິດຈະກໍາກໍາການຝຶກຫັດເຫດການຈໍາລອງເພື່ອປະເມີນຄວາມພ້ອມ | ເພື່ອກໍານົດຊ່ອງຫ່ວາງ ແລະ ບັນດາກິດຈະກໍາທີ່ເປັນການວາງແຜນວຽກ. | ຣສສ, ອົງການອາຫານໂລກ ແລະ ໜ່ວຍງານພະລາທິການສາກົນ, |
| 6 | ກໍານົດທາງເລືອກໃນການການຈັດຊື້ຈັດຈ້າງແລະການຂົນສົ່ງ | ເພື່ອເຂົ້າໃຈກ່ຽວກັບເສັ້ນທາງຂົນສົ່ງ ແລະ ຂໍ້ຈໍາກັດ. | ຣສສ, ຍທກ, ອົງການອາຫານໂລກ |
| 7 | ກໍານົດແຜນທີ່ດ້ານທີ່ຕັ້ງຂອງສາງ, ຄວາມສາມາດໃນການບັນຈຸເຄື່ອງ ແລະ ທີ່ຕັ້ງຂອງສາງຊົ່ວຄາວ. | ໄດ້ມີການລະບຸຄວາມສາມາດໃນການບັນຈຸເຄື່ອງໃນສາງລ່ວງໜ້າເພື່ອຮອງຮັບການຫລັງໄຫລເຂົ້າມາຂອງເຄື່ອງບັນເທົາທຸກ | ຣສສ, ອົງການອາຫານ, ເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການ |
| **ງ. ການຄຸ້ມຄອງ ແລະ ການແຈກຢາຍເຄື່ອງບັນເທົາທຸກ (ທີ່ຕ້ອງການ ແລະ ເປັນການບໍລິຈາກ)** | | | |
| 1 | ສ້າງມາດຕະຖານການຄຸ້ມຄອງສາງ, ຄູ່ມື ແລະ ການຝຶກອົບຮົມ | ເສີມຂະຫຍາຍການຄຸ້ມຄອງສາງ ແລະ ການຕິດຕາມເຄື່ອງບັນເທົາທຸກ. | ຣສສ, ອົການອາຫານໂລກ, ອົງການກາແດງ, ອົງການອານາໄມໂລກ ກະຊວງສາທາ |
| 2 | ສ້າງກຸ່ມແຮງງານ ແລະ ອາສາສະໝັກເພື່ອຮອງຮັບໃນການເກັບມ້ຽນເຄື່ອງໃນສາງ ແລະ ການແຈກຢາຍເຄື່ອງ. | ເພື່ອມີຈໍານວນພະນັກງານໄວ້ເພື່ອໃຫ້ການຊ່ວຍເຫຼືອດ້ານພາລາທິການໃນເຫດສຸກເສີນ. | ຣສສ, ອົງການກາແດງ, ອົງການອາຫານໂລກ, ກອງທັບ, NGO's, ອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ ແລະ ແມ່ຍິງ). |
| 3 | ສ້າງຄູ່ມືສໍາລັບການຮັບເອົາເຄື່ອງບັນເທົາທຸກຈາກສາກົນ ແລະ ການສະເໜີການໃຫ້ການຊ່ວຍເຫຼືອ (ໝາຍເຫດ: ຂຶ້ນກັບຄູ່ມືດ້ານການປະເມີນດ້ານຄວາມຕ້ອງການ). | ເພື່ອແກ້ໄຂບັນຫາຂໍ້ຄົງຄ້າງຂອງວຽກງານການຈັດຊື້ຈັດຈ້າງ ແລະ ກໍານົດເຄື່ອງບູລິມະສິດໃນການຊ່ວຍເຫລືອສຸກເສີນ | ຣສສ, ອົງການອາຫານໂລກ, ກຕປທ, ບັນດາສະຖານທູດ, ຄູ່ຮ່ວມພັດທະນາ, ກົມພາສີ (ກງ) |
| 4 | ສ້າງຄູ່ມື ແລະ ອຸປະກອນດ້ານການສື່ສານເພື່ອປ້ອງກັນ / ຄຸ້ມຄອງການມາຮອດຂອງເຄື່ອງບັນເທົາທຸກທີ່ມີບູລິມະສິດຕໍ່າ. | ພະຍາຍາມປ້ອງກັນການຂົນສົ່ງ ຫຼື ການຂົນສົ່ງສິ່ງຂອງພາຍໃນທີ່ບໍ່ຈໍາເປັນເຊິ່ງເປັນທີ່ກີດຂວາງວຽກງານການຈັດຊື້ຈັດຈ້າງ | ຣສສ, ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ, ອົງການກາແດງລາວ, ກສທ |

| | | | |
|---|---|---|---|
| 5 | ສ້າງຂໍ້ຕົກລົງໄລຍະຍາວ ແລະ ຂໍ້ຕົກລົງການໃຊ້ບໍລິການທີ່ທຸກໆພາກສ່ວນສາມາດນຳໃຊ້ໄດ້. | ເພື່ອເຮັດໃຫ້ການຈັດຊື້-ຈັດຈ້າງ ແລະ ການບໍລິການວ່ອງໄວໃນລາຄາທີ່ຕາຍຕົວ. | ອົງການສະຫະປະຊາຊາດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ອົງການກາແດງລາວ |
| 6 | ສ້າງບ່ອນ ປ້ອນຂໍ້ມູນອັອນລາຍກ່ຽວກັບສິ່ງຂອງບັນເທົາທຸກໃນປະເທດ ແລະ ບ່ອນທີ່ຈະເກັບມ້ຽນ. | ເນັ້ນໃຫ້ເຫັນຈຸດທີ່ຊໍ້າກັນ ແລະ ຊ່ອງຫວ່າງ, ຫຼຸດຜ່ອນຈຸດທີ່ຊໍ້າກັນ ແລະ ກຳນົດສິ່ງຂອງບັນເທົາທຸກເພື່ອໃຫ້ວ່ອງໄວໃນການຂົນສົ່ງ ແລະ ປ່ອຍເຄື່ອງອອກສາງໃນລະຫວ່າງເຫດສຸກເສີນ. | ຣສສ, ອົງການອາຫານໂລກ, ເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການ, ອົງການກາແດງລາວ |
| | **ຈ. ການສື່ສານ ແລະ ການປະສານງານລະຫວ່າງອົງກອນ / ຫນ່ວຍງານ** | | |
| 1 | ກຳນົດຜູ້ທີ່ມີສ່ວນຮ່ວມ ແລະ ຜູ້ປະສານງານຫລັກຂອງວຽກງານພະລາທິການ (ລັດຖະບານ, ອົງການສະຫະປະຊາຊາດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ພາກເອກະຊົນ). | ຮູ້ຜູ້ຕິດຕໍ່ຫຼັກເມື່ອມີເຫດສຸກເສີນ | ອົງການອາຫານໂລກ, ຣສສ, ອົງການກາແດງລາວ |
| 2 | ທົບທວນຄືນ ແລະ ອັບເດດເອກະສານ ToR ດ້ານພະລາທິການຂອງ ສປປ ລາວ. | ຮູ້ໄດ້ກ່ຽວກັບຄວາມຮັບຜິດຊອບ ແລະ ພະລາຫນ້າທີ່ຂອງຂອງຜູ້ຮັບຜິດຊອບວຽກງານພາລາທິການ | ອົງການອາຫານໂລກ, ຣສສ, ອົງການກາແດງລາວ |
| 3. | ສ້າງຄູ່ມືມາດຕະຖານຂັ້ນຕອນໃນການຈັດຕັ້ງປະຕິບັດດ້ານການສື່ສານ ແລະ ການປະສານງານຂອງວຽກງານພະລາທິການຂອງ ສປປ ລາວ. | ສ້າງເອກະສານຕາມທີ່ຕົກລົງໄວ້ກ່ຽວກັບຂັ້ນຕອນໃນການຈັດຕັ້ງປະຕິບັດກິຈະກຳ ແລະ ບົດບາດຫນ້າທີ່ຂອງຜູ້ຮັບຜິດຊອບ | ອົງການອາຫານໂລກ, ຣສສ, ອົງການກາແດງລາວ |
| 4 | ພັດທະນາຊ່ອງທາງໃນການສື່ສານ ແລະ ປະສານງານຂອງວຽກງານພະລາທິການ (ເຊື່ອມຕໍ່ກັບ ກ1–3). | ຂໍ້ມູນດ້ານພະລາທິການແມ່ນມີສະໜອງໃຫ້ທຸກໆພາກສ່ວນ. | ຫນ່ວຍງານພະລາທິການສາກົນ, ອົງການຫາໂລກ, ຣສສ, |
| 5 | ຈັດກອງປະຊຸມດ້ານວຽກງານພະລາທິການ 2 ຄັ້ງຕໍ່ປີ ແລະ ຄັ້ງອື່ນໆຖ້າຫາກມີຄວາມຈຳເປັນ. | ຮັກສາເຄືອຄ່າຍ ແລະ ຂໍ້ມູນຕິດຕໍ່ຂອງຜູ້ຮັບຜິດຊອບ. ລາຍງານຄວາມຄືບໜ້າຂອງກິດຈະກຳ. | ອົງການອາຫານໂລກ, ຣສສ, |
| 6 | ຈັດການຝຶກແອບເຫດການຈຳລອງ ໃນການປະສານງານດ້ານພະລາທິການ. | ກຳນົດຊ່ອງຫວ່າງ, ຄວາມຕ້ອງການ, ສິ່ງທ້າທາຍ ແລະ ຂໍ້ຄົງຄ້າງ ແລະ ປັບປຸງແຜນກິດຈະກຳກ່ຽວກັບ ວຽກກະກຽມຄວາມພ້ອມດ້ານພະລາທິການໃນອະນາຄົດ. | ຫນ່ວຍງານພະລາທິການສາມກົນ, ອົງການຫາໂລກ, ຣສສ |
| 7 | ປັບປຸງສາງຂອງ ຣສສ ໃຫ້ເປັນລະດັບສາກົນໃນການເກັບມ້ຽນເຄື່ອງບັນເທົາທຸກ. | ມີສາງຂະໜາດໃຫ່ຍໃນນະຄອນຫຼວງວຽງຈັນທີ່ສາມາດສ້າງໃຫ້ເປັນຈຸດໃຈກາງສຳລັບທຸກໆພາກສ່ວນຂອງຂະແໜງບັນເທົາທຸກ. | ຣສສ, ອາຫານໂລກ |

# ຂັ້ນຕອນຕໍ່ໄປ

ໄດ້ມີການກຳນົດຂັ້ນຕອນຕໍ່ໄປໃນກອງປະຊຸມຄື:

- ເລີ່ມການພັດທະນາແຜນກິດຈະກຳດ້ານການກະກຽມຄວາມພ້ອມດ້ານພະລາທິການບົນພື້ນຖານຜົນໄດ້ຮັບຂອງກອງປະຊຸມ.
- ສ້າງເອກະສານແນວຄວາມຄິດສຳລັບກິດຈະກຳການຝຶກຫັດການຈຳລອງດ້ານພະລາທິການສຳລັບ ສປປ ລາວ;
- ເລີ່ມຕົ້ນຈັດຕັ້ງປະຕິບັດບັນດາກິດຈະກຳທີ່ເປັນບຸລິມະສິດທີ່ທາງ ກະຊວງຮສສ ໄດ້ນຳສະເຫນີ.
- ສົ່ງຕໍ່ຂໍ້ສະເໜີທີ່ໄດ້ຈາກກອງປະຊຸມກ່ຽວກັບການສື່ສານ ແລະ ການປະສານງານ ໃຫ້ແກ່ຫ້ອງການປະສານງານອົງການສະຫະປະຊາຊາດ.

# ຜົນຂອງ**ການປະເມີນຜົນ**

ຜູ້ເຂົ້າຮ່ວມທັງຫມົດຖືກຖາມດ້ວຍ 4 ຄຳຖາມກ່ຽວກັບການກະກຽມຄວາມພ້ອມດ້ານພະລາທິການໃນອະນາຄົດ ແລະ ປະສິດຕິພາບຂອງຮູບແບບການຝຶກອົບຮົມຄື:

**1. ເຈົ້າຄິດວ່າການກະກຽມຄວາມພ້ອມດ້ານພະລາທິການແມ່ນສຳຄັນແນວໃດສຳລັບ ສປປ ລາວ?**

- 100% ຂອງຜູ້ຕອບຄຳຖາມໄດ້ກ່າວວ່າ: ວ່າການກະກຽມຄວາມພ້ອມດ້ານພະລາທິການແມ່ນສຳຄັນສຳລັບ ສປປ ລາວ. ເຊິ່ງການຕອບແມ່ນນັບແຕ່ສຳຄັນຫຼາຍ, ສຳຄັນທີ່ສຸດ ແລະ ສຳຄັນສູງສຸດ.
- ຫຼາຍໆຄົນໄດ້ອ້າງອີງເຖິງເຫດການນ້ຳຖ້ວມຄັ້ງລ່າສຸດ ເຊິ່ງໄດ້ເປັນການເນັ້ນໃຫ້ເຫັນໜ້າວຽກເພີ່ມທີ່ຈະຕ້ອງປະຕິບັດໃນການກະກຽມການຕອບໂຕ້ທີ່ດີຂຶ້ນ ແລະ ຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະ ແລະ ຜູ້ທີ່ໄດຮັບຜົນປະໂຫຍດ.

**2. ອົງກອນຂອງທ່ານມີຄວາມສົນໃຈໃນການເຂົ້າຮ່ວມການເຮັດບົດຝຶກຫັດການຈຳລອງກ່ຽວກັບການຕອບໂຕ້ຕໍ່ໄພພິບັດເທິງຄອມພິວເຕີບໍ່ໃນປີນີ້? ສົນໃຈ ແລະ ບໍ່ສົນໃຈ ຍ້ອນຫັຍງ?**

- 100% ຂອງຜູ້ຕອບຄຳຖາມໄດ້ກ່າວວ່າ: ພວກເຂົາ ສົນໃຈໃນການເຂົ້າຮ່ວມການເຮັດບົດຝຶກຫັດເຄືອຄ່າຍການຈຳລອງກ່ຽວກັບການຕອບໂຕ້ຕໍ່ໄພພິບັດ.
- ເຊິ່ງຄຳເວົ້າຂອງຜູ້ຕອບຄຳຖາມກ່າວວ່າ:
  - "ເພື່ອເປັນປະໂຫຍດໃນການປັບປຸງການປະສານງານ ລະຫວ່າງ ລັດຖະບານ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສອດຄ່ອງກັບລະບົບ".
  - "ກ່ຽວຂ້ອງກັບບົດບາດຂອງຕົນໃນການຝຶກເຫດການຈຳລອງ ແລະ ໄດ້ຮັບຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບຊັບພະຍາກອນທີ່ມີສຳລັບວຽກງານພະລາທິການ."

3. **ອີງກອນຂອງທ່ານໃຫ້ຄວາມສົນໃຈແກ່ການຊຸກຍູ້ການສ້າງ ແລະ ການຈັດຕັ້ງປະຕິບັດກິດຈະກໍາການກະກຽມຄວາມພ້ອມພະລາທິການຜ່ານທາງເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການບໍ? ສົນໃຈ ແລະ ບໍ່ສົນໃຈ ຍ້ອນຫຍັງ?**

- 100% ຂອງຜູ້ຕອບຄໍາຖາມໄດ້ກ່າວວ່າ: ເຂົາເຈົ້າສົນໃຈທີ່ຈະເຂົ້າຮ່ວມໃນເຄືອຄ່າຍການກະກຽມຄວາມພ້ອມດ້ານພາລາທິການ
- ເຊິ່ງຄໍາເວົ້າຂອງຜູ້ຕອບຄໍາຖາມກ່າວວ່າ:
    - "ເພື່ອປັບປຸງການສື່ສານ, ການປະສານງານ, ການແບ່ງປັນຄວາມຮູ້ ແລະ ໃຫ້ເຫັນພາບທີ່ກວ້າງຂຶ້ນ."
    - "ວຽກງານພາລາທິການແມ່ນເປັນບັນຫາທີ່ສໍາຄັນການໃນການຕອບໂຕ້ໄພພິບັດໃນ ສປປ ລາວ."

4. **ທ່ານຄິດແນວໃດກ່ຽວກັບການຈັດກຸ່ມສົນທະນາທີ່ເປັນຮູບແບບ "World Café" ? ທ່ານຢາກເຫັນການຈັດຮູບແບບດັ່ງກ່າວນີ້ອີກບໍ່ໃນອະນາຄົດ?**

- 100% ຂອງຜູ້ຕອບຄໍາຖາມໄດ້ກ່າວວ່າ: ເຂົາເຈົ້າມັກການຈັດຮູບແບບດັ່ງກ່າວ ແລະ ຢາກໃຫ້ຈັດແບບນີ້ອີກໃນອະນາຄົດ.
- ເຊິ່ງຄໍາເວົ້າສ່ວນຫຼາຍແມ່ນເປັນວິທີການທີ່ມີປະສິດຕິພາບສໍາລັບທຸກຄົນທີ່ພົວພັນ ແລະ ສາມາດປະກອບສ່ວນດ້ານຄວາມຮູ້ໄດ້ຢ່າງວ່ອງໄວ.

# ເອກະສານຊ້ອນທ້າຍ

**ບັນຊີລາຍຊື່ຜູ້ເຂົ້າຮ່ວມ:**

| 7 ກະຊວງ, 3 ແຂວງ, 1 ເມືອງ, ອົງການກາແດງລາວ, 5 ອົງການທີ່ບໍ່ຂຶ້ນກັບລັດຖະບານ, 5 ອົງການຜູ້ຕາງໜ້າອົງການສະຫະປະຊາຊາດ, 2 ຄູ່ຮ່ວມພັດທະນາ | | | | | |
|---|---|---|---|---|---|
| # | ຊື່ | ອົງການ | # | ຊື່ | ອົງການ |
| 1 | ທ່ານ ສີພະຈັນ | UNICEF | 21 | ທ່ານ ສົມພອນ ບຸນນະພົນ | IOM |
| 2 | ດຣ ສີວິໄລ | ອົງການກາແດງລາວ | 22 | ທ່ານ ສົມພາບົງ ພົງພິລາ | CHAI |
| 3 | ທ່ານ ສຸກສະຫວັນ | ຣສສ | 23 | ທ່ານ ຈິໄລວັນ ໄຊຍະລິດ | UNFPA |
| 4 | ທ່ານ ພົມມາ | UNICEF | 24 | ທ່ານ ຈັນທະໜອມ | SCI |
| 5 | ທ່ານ ວາບີ ຕູຢັງຈີ | ຣສສ | 25 | ທ່ານ ໄວໄລສັກ ໄວໄລພັນ | Plan |
| 6 | ທ່ານ ນາງ ວິໄລຈັນ ສົມມາລາວົງ | ຣສສ | 26 | ທ່ານ ຄຳພຸຍ ພົມມະຈັນ | ກະຊວງການເງິນ |
| 7 | ທ່ານ ບຸນສຸກ ພິລາໄຊ | ກະຊວງປ້ອງກັນປະເທດ | 27 | ທ່ານ ສຸຣິສັກ ສົມມະໂນໄທ | MoPS |
| 8 | ທ່ານ ວິໄລຄຳ ລາດຊະອາດ | ຣສສ | 28 | ທ່ານ Ngujen Phuong Danh | FAO |
| 9 | ທ່ານ ສຸຣິສັກ ພັນທະໜອມ | Caritas | 29 | ທ່ານ ລາລົງກອນ ຈັນທະມາລີ | WFP |
| 10 | ທ່ານ Dale Wilson | WFP | 30 | ທ່ານ ສຳລານ ບຸນທະວົງ | WFP |
| 11 | ທ່ານ ພອນທອຍ ທຳເມືອງໂສ | ຣສສ | 31 | ທ່ານ ທະນູເພັດ ໄຊຍະວົງ | ກຊຕປທ |

| | | | | | |
|---|---|---|---|---|---|
| 12 | ທ່ານ Jan Delbaere | WFP | 32 | ທ່ານ ນາງ ວຽງມະນີ ອ່ອນປະເສີດ | WFP |
| 13 | ທ່ານ ພອນ ໄພດິດ | ຍທຂ | 33 | ທ່ານ David Duncan | UNICEF |
| 14 | ທ່ານ ສຸດາໄລ ສຸວັນນະວົງ | ທະນາຄານ ພັດທະນາອາຊີ | 34 | ທ່ານ ນາງ Isabel Hottela RT | ສະຖານທູດຝະລັ່ງ |
| 15 | ທ່ານ ເພັດດາວັນ ລີວັງວິໄລ | WHO | 35 | ທ່ານ Mayouna Bounlu | WHO |
| 16 | ທ່ານ Patricia Thornhill | GLC/WFP | 36 | ທ່ານ ບຸນພົງ ອ່ອນພະຈັນ | PLSW - ແຂວງອຸດົມໄຊ |
| 17 | ທ່ານ Simbane | Care | 37 | ທ່ານ ຊະນະພົນຄໍາທິພົງ | PLSW - ແຂວງຄໍາມ່ວນ |
| 18 | ດຣ ດາວວິໄລ | ກສທ | 38 | ທ່ານ ທະນາກອນ ເທບນິຍົມ | PLSW - ແຂວງອັດຕະປື |
| 19 | ວິໄລກອນ | WFP | 39 | ທ່ານ ຫວ່ານໄຈໄຊຍະພູມ | PLSW - ເມືອງສະໜາມໄຊ |
| 20 | ທ່ານ ວິໄລພອນ ສີສົມວົງ | ຮສສ | | | |

## ແຜນກິດຈະກຳອື່ນ:

ແຜນກິດຈະກຳດັ່ງຕໍ່ໄປນີ້ແມ່ນຖືກກຳຫນົດໂດຍຜູ້ເຂົ້າຮ່ວມທັງຫມົດຈາການເຮັດກິດຈະກຳເປັນກຸ່ມແຕ່ວ່າຢູ່ນອກຂອບຂອງໂຄງການການກະກຽມຄວາມພ້ອມດ້ານພະລາທິການ. ບັນດາກິດຈະກຳດັ່ງກ່າວແມ່ນມີຈຸດປະສົງເພື່ອປັບປຸງການປະສານງານລະຫວ່າງອົງການ ແລະ ຫນ່ວຍງານ ໃນການຕອບໂຕ້ໄພພິບັດ

| ອື່ນໆ - ການປະສານງານສຸກເສີນ / ການປະສານງານຂອງພະລາທິການ | | |
|---|---|---|
| **ກິດຈະກຳ** | **ຈຸດປະສົງ** | **ອົງການທີ່ນຳພາ** |
| ສ້າງທີມງານໃນການປະເມີນຜົນກະທົບຫລັງເກີດໄພພິບັດ ພ້ອມທັງເຄື່ອງມືແລະ ຄູ່ມື | ປັບປຸງການປະສານງານໃນເວລາມີເຫດສຸກເສີນ ລະຫວ່າງອົງກອນ | ຣສສ, ອົງການກາແດງ, UNDRR, ຜູ້ນຳພາດ້ານພາລາທິການ |
| ສ້າງສູນດຳເນີນງານເຫດສຸກເສີນ ຫຼື EOC ໃນຂັ້ນສູນກາງ ແລະ ຂັ້ນແຂວງ, ພ້ອມທັງຫ້ອງການປະສານງານທ້ອງຖິ່ນສຳລັບເມືອງທີ່ໄດ້ຮັບຜົນກະທົບ. | ສົ່ງເສີມການປະສານງານດ້ານເຫດສຸກເສີນ ແລະ ພາລາທິການຂ້າມຂະແໜງການ. | ຣສສ, ອົງການກາແດງ, UNDRR, ຜູ້ນຳພາດ້ານພາລາທິການ |
| ສ້າງການຮັບມືກັບເຫດສຸກເສີນ ແລະ ການຝຶກອົບຮົມ EOC ແລະ ຄູ່ມື | ສົ່ງເສີມການປະສານງານດ້ານເຫດສຸກເສີນ ແລະ ພາລາທິການຂ້າມຂະແໜງການ. | ຣສສ, ອົງການກາແດງ, UNDRR, ຜູ້ນຳພາດ້ານພາລາທິການ |
| ສ້າງລະບົບເຕືອນໄພລ່ວງໜ້າ ທີ່ສາມາດແບ່ງປັນຂໍ້ມູນກັບຄູ່ຮ່ວມງານດ້ານມະນຸດສະທຳ | ມີລະບົບການເຕືອນສາທາລະນະ ແລະ ການກະກຽມການໂຕ້ຕອບກັບເຫດສຸກເສີນ. | ກຊສ, ຣສສ, UNDRR, |
| ສ້າງຄູ່ມືການແຈກຢາຍເຄື່ອງບັນເທົາທຸກມາດຕະຖານ ພ້ອມດ້ວຍເປົ້າໝາຍ, ເຊິ່ງລວມມີ: ເຄື່ອງບັນເທົາທຸກ,ເງິນສົດ ແລະ ຄູ່ມື Vouchers (ເຊື່ອມຕໍ່ກັບຄູ່ມືການເຂົ້າເຖິງຕະຫຼາດ ແລະ ລະບົບຖານຂໍ້ມູນການແຈກຢາຍເຄື່ອງບັນເທົາທຸກ). | ສ້າງຄູ່ມືການຝຶກອົບຮົມທີ່ສອດຄ່ອງກັບສະພາບຂອງປະເທດລາວ | ຣສສ, WFP, UNDP, ກຸ່ມເຮັດວຽກທີ່ອາໄສເງິນສົດ |
| ສ້າງຄູ່ມືການເຂົ້າເຖິງຕະຫຼາດ | | TBC |
| ສ້າງລະບົບຖານຂໍ້ມູນບັນເທົາທຸກສຳລັບການແຈກຢາຍເຄື່ອງບັນເທົາທຸກເພື່ອຕິດຕາມ ຜູ້ຮັບຜິດຊອບໃນການແຈກຢາຍ, ສະຖານທີຂອງການແຈກຢາຍ | ຫຼີກລ່ຽງຊ່ອງຫວ່າງໃນການແຈກຢາຍ ແລະ ຊໍ້າຊ້ອນກັນ. | TBC |
| ສ້າງຄູ່ມືໃນການປະເມີນດ້ານຄວາມຕ້ອງການ (ເຊື່ອມກັບຄູ່ມືການປະເມີນໄພພິບັດ). | ເພື່ອກຳນົດບູລິມະສິດດ້ານຈຳນວນ ແລະ ປະເພດຂອງເຄື່ອງບັນເທົາທຸກທີ່ຕ້ອງໄດ້ທີການສະໜອງໃຫ້ແກ່ປາຊົນຊົນທີ່ໄດ້ຮັບຜົນກະທົບ. | TBC |
| ອັບເດດ 3Ws ອົງການສະຫະປະຊາຊາດ, ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ, ລັດຖະບານ (ເພີ່ມລາຍລະອຽດໃນຮູບແບບພາລາທິການ). | | WFP, ຣສສ, ອົງການກາແດງ |
| ຈັດບົດຝຶກຫັດທີ່ມີຫຼາຍພາກສ່ວນ, ການຈຳລອງດ້ານພະລາທິການສາກົນ. | ປະເມີນ/ທົດສອບແຜນທົບທວນການປະສານງານລະຫວ່າງອົງການໃນການປະສານງານຫຼັງເກີດໄພພິບັດ. | WFP, ຣສສ, ອົງການກາແດງ |